ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ເມືອງຄົງເຊໂດນ
ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງຄົງເຊໂດນ

ເລກທີ..44.../ຍທຂ.ມຄ
ວັນທີ..19/3/2026

## ໜັງສືແຈ້ງເຊີນເຂົ້າຮ່ວມຊື້ຊອງການແຂ່ງຂັນປະມູນຈັດຊື້-ຈັດຈ້າງທາບທາມລາຄາຫົວໜ່ວຍ ວຽກສ້ອມແປງທາງຟື້ນຟູໄພພິບັດ ປີ 2026

ເຖິງ: ທ່ານຫົວໜ້າບໍລິສັດຜູ້ຮັບເໝົາກໍ່ສ້າງພາຍໃນຂອບເຂດແຂວງ ແລະ ຕ່າງແຂວງ ທີ່ນັບຖື.

ເລື່ອງ : ການແຈ້ງເຊີນເຂົ້າຮ່ວມຊື້ຊອງການແຂ່ງຂັນປະມູນຈັດຊື້-ຈັດຈ້າງທາບທາມລາຄາຫົວໜ່ວຍວຽກສ້ອມແປງທາງຟື້ນຟູໄພພິບັດປີ 2026

- ອີງຕາມ: ຂໍ້ຕົກລົງຕາງໜ້າຄະນະກຳມະການປົກຄອງເມືອງຄົງເຊໂດນ, ສະບັບເລກທີ 134/ຄປມ.ມຄ, ລົງວັນທີ18/ 3/ 2026
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງ ຍທຂ, ສະບັບເລກທີ 9555/ຍທຂ, ລົງວັນທີ16/ 07/ 2009 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກ ຍທຂ ປະຈຳແຂວງ ແລະ ນະຄອນຫຼວງ.
- ອີງຕາມ: ແຈ້ງການຂອງຫ້ອງການການເງິນເມືອງ ຄົງເຊໂດນ ສະບັບເລກທີ 16/ ກງມ, ລົງວັນທີ 3/ 3/ 2026

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ ຄົງເຊໂດນ, ຂໍແຈ້ງເຊີນເຂົ້າຮ່ວມຊື້ຊອງການແຂ່ງຂັນປະມູນລາຄາຫົວໜ່ວຍວຽກສ້ອມແປງທາງຟື້ນຟູໄພພິບັດ ປີ 2026ໃນຈຳນວນ 7 ໂຄງການ ຄື :

1. ໂຄງການ: ຟື້ນຟູໄພພິບັດ ຍົກລະດັບທາງປູດິນເລຕາລິດ ທາງເລກທີ 7015 ແຕ່ແຍກທາງ 6946 ບ້ານສະໂອ ຫາ ບ້ານຮັງແຮ້ງ ຫາ ບ້ານດອນແກ້ວ ເມືອງຄົງເຊໂດນ ລວງຍາວ 5.400 ມ ລວງກວ້າງ 5 ມ.
2. ໂຄງການ: ຟື້ນຟູໄພພິບັດ ຍົກລະດັບທາງປູດິນເລຕາລິດ ທາງເລກທີ 7014 ແຕ່ແຍກທາງ 6946 ບ້ານແກ້ງໂດນ ຫາ ບ້ານໜາມແທ່ງ ລວງຍາວ 4.000 ມ ລວງກ້ວາງ 5 ມ.
3. ໂຄງການ: ຟື້ນຟູໄພພິບັດ ຍົກລະດັບທາງປູດິນເລຕາລິດ ທາງເລກທີ 6960 ຫາ ແຍກທາງ 6902 ບ້ານບົວລະພາ - ບ້ານໂນນຄໍ້ - ບ້ານແກ້ງຕະຫວັງ ລວງຍາວ 4.500 ມ ລວງກວ້າງ 5 ມ
4. ໂຄງການ: ຟື້ນຟູໄພພິບັດ ຍົກລະດັບທາງປູດິນເລຕາລິດ ທາງເລກທີ 6950 ແຍກທາງ 6902 ບ້ານເລົ່າມີໄຊ - ບ້ານຂຸມຄາ - ບ້ານນາເມັກ ລວງຍາວ 4.800 ມ ລວງກວ້າງ 5 ມ.
5. ໂຄງການ: ກໍ່ສ້າງຟື້ນຟູເສັ້ນທາງເລກທີ 7234 (ແຕ່ແຍກທາງ 15 ບ້ານດິນກອກ ຫາ ວັດປ່າ) – (ແຕ່ແຍກທາງ 15 ໂຮງຮຽນ ບ້ານດິນກອກ ຫາ ວັດປ່າ) ລວງຍາວ 5.000 ມ ລວງກວ້າງ 5 ມ.
6. ໂຄງການ: ຟື້ນຟູໄພພິບັດ ຍົກລະດັບທາງປູດິນເລຕາລິດ ແຕ່ແຍກທາງ 2.6902 ບ້ານຫຼັກ 6 ຫາ ບ້ານຕະຫຼາງ, ບ້ານສະເທີບ ເມືອງຄົງເຊໂດນ ແຂວງສາລະວັນ ລວງຍາວ 8.250 ມ ລວງກວ້າງ 5 ມ.
7. ໂຄງການ: ຟື້ນຟູໄພພິບັດ ຍົກລະດັບທາງປູດິນເລຕາລິດ ບ້ານສະເທີບ ຫາ ບ້ານປົ່ງ ເມືອງຄົງເຊໂດນ ແຂວງສາລະວັນ ລວງຍາວ 4.000 ມ ລວງກວ້າງ 5 ມ.

สแกนด้วย CamScanner

- ແຫຼ່ງທຶນໃນການຊຳລະສະສາງໃນວຽກງານດັ່ງກ່າວ ແມ່ນນຳໃຊ້ງົບປະມານຂອງລັດຖະບານປີ 2026.
- ການແຈ້ງເຊີນເຂົ້າຮ່ວມຊື້ຊອງການແຂ່ງຂັນປະມູນຈັດຊື້-ຈັດຈ້າງທາບທາມລາຄາຫົວໜ່ວຍຈະດຳເນີນຕາມຂັ້ນຕອນທີ່ໄດ້ກຳນົດໄວ້ຢູ່ໃນດຳລັດວ່າດ້ວຍການປະມູນຈັດຊື້ຈັດຈ້າງສະບັບເລກທີ 03/ນຍ,ລົງ ວັນທີ 9 ມັງກອນ 2004
- ບໍລິສັດທີ່ມີຄວາມເໝາະສົມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ ຄົງເຊໂດນ ແຂວງສາລະວັນ ( ຕາມວັນ ແລະ ໂມງລັດຖະການ ).
- ບໍລິສັດໃດທີ່ຕ້ອງການຊື້ຊອງເອກະສານ ການແຂ່ງຂັນປະມູນລາຄາຫົວໜ່ວຍແມ່ນໃຫ້ມາພົວພັນຢູ່ທີ່ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ ຄົງເຊໂດນ ເລີ່ມແຕ່ວັນທີ 19 /3/2026 ຫາ ວັນທີ 17/4/2026 ໃນລາຄາ 500,000 ກີບ/1 ຊອງປະມູນ ) ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
- ໃນຕອນເຊົ້າ ຂອງວັນທີ 17/4/2026 ຈະໄດ້ຈັດການປະມູນຂຶ້ນທີ່ຫ້ອງການ ຍ ທ ຂ ເມືອງຄົງເຊໂດນ ເວລາ 13 : 30, ທຸກໆ ບໍລິສັດຕ້ອງໄດ້ຍື່ນຊອງໃຫ້ຄະນະກຳມະການ ພ້ອມທັງປິດຮັບຊອງ, ເວລາ14 ໂມງ 30 ແມ່ນເຂົ້າຮ່ວມກອງປະຊຸມເປີດຊອງລາຄາຫົວໜ່ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານປະທານ ຜູ້ອຳນວຍການບໍລິສັດ ພາຍໃນຂອບເຂດທົ່ວປະເທດ ຜູ້ທີ່ສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ. **( ໝາຍເຫດ : ປິດຂາຍຊອງ ວັນທີ ....../....../2026 ເວລາ 15:30 ໂມງ )**

ຫົວໜ້າຫ້ອງການ

ວິລະພົນ ມາທິປັນຍາ

ເບີຕິດຕໍ່ສອບຖາມ

034 411323

ໂທ : 02022656456